# <u>ບົດກ່າວຕ້ອນຮັບ</u>

**ຂອງທ່ານ ນາງ ສີງຄໍາ ຄົງສະຫວັນ, ຄະນະປະຈໍາພັກແຂວງ, ຮອງເຈົ້າແຂວງ, ແຂວງວຽງຈັນ**

**ໃນກອງປະຊຸມປຶກສາຫາລືບັນດາຫົວຂໍ້ທີ່ຕິດພັນກັບວາລະກອງປະຊຸມໂຕະມົນ ປະຈໍາປີ 2016**

**ເພື່ອເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ່ VIII (2016-2020), ທີ່ ແຂວງ ວຽງຈັນ, ວັນທີ 24 ພະຈິກ 2016.**

- ພະນະທ່ານ ດຣ. ກິແກ້ວ ຈັນທະບຸຣີ ຮອງລັດຖະມົນຕີ ກະຊວງແຜນການ ແລະການ ລົງທຶນ ທີ່ເຄົາລົບນັບຖືຢ່າງສູງ.
- ບັນດາທ່ານ ລັດຖະມົນຕີ/ຮອງລັດຖະມົນຕີ, ທີ່ເຄົາລົບຢ່າງສູງ
- ທ່ານ ນ. ຄາຣີນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງ ໜ້າ ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາ ສປປ ລາວ ທີ່ນັບຖື
- ບັນດາທ່ານ ທູຕານຸທູດ, ຜູ້ຕາງຫນ້າອົງການຈັດຕັ້ງສາກົນ ແລະບັນດາຄູ່ຮ່ວມພັດທະນາ ທີ່ຮັກແພງ
- ຜູ້ຕາງໜ້າ ກະຊວງຂະແໜງການ ແລະພະແນກການອ້ອມຂ້າງ ແຂວງ ວຽງຈັນ ແລະຜູ້ ຕາງໜ້າພະແນກແຜນການ ແລະການລົງທຶນ ຈາກນະຄອນຫຼວງວຽງຈັນ ແລະ16 ແຂວງ.

ຂ້າພະເຈົ້າ ຕາງໜ້າໃຫ້ຄະນະນໍາແຂວງວຽງຈັນ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ທາງ ກະຊວງແຜນ ການ ແລະການລົງທຶນ, **ຄູ່ຮ່ວມພັດທະນາ** ແລະອົງການ ສປຊ ເພື່ອການ ພັດທະນາ ໄດ້ເລືອກເອົາແຂວງ ວຽງຈັນ ພວກຂ້າພະເຈົ້າ ເປັນເຈົ້າພາບ ໃນການຈັດກອງປະຊຸມທີ່ ສໍາຄັນໃນຄັ້ງນີ້, ຂໍສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນ ແລະຄວາມຂອບໃຈເປັນຢ່າງສູງ ໃນ ການເຂົ້າຮ່ວມກອງປະຊຸມ ເພື່ອປຶກສາຫາລືບັນດາຫົວຂໍ້ທີ່ຕິດພັນກັບວາລະກອງປະຊຸມໂຕະມົນ ປະຈໍາປີ 2016 ເພື່ອເລັ່ງລັດຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

ຂ້າພະເຈົ້າມີຄວາມພາກພູມໃຈ, ດີໃຈເປັນຢ່າງຍິ່ງ ແລະເປັນກຽດຢ່າງສູງ ທີ່ໄດ້ຕ້ອນຮັບ ບັນດາທ່ານ ລັດຖະມົນຕີ/ຮອງລັດຖະມົນຕີ, ບັນດາທ່ານທູດຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງ ສາກົນ ແລະຄູ່ຮ່ວມພັດທະນາ, ບັນດາທ່ານຫົວໜ້າກົມ/ຮອງກົມ ແລະຜູ້ແທນຈາກ ນະຄອນຫຼວງ ວຽງຈັນ ແລະ 16 ແຂວງ ທີ່ໄດ້ສະຫຼະເວລາອັນມີຄ່າ ແລະໃຫ້ກຽດມາຮ່ວມກອງປະຊຸມໂຕະມົນ ຂັ້ນແຂວງໃນຄັ້ງນີ້.

**ແຂກຜູ້ມີກຽດ,**

**ທ່ານຍິງ ແລະທ່ານຊາຍ ທີ່ນັບຖື ແລະຮັກແພງ,**

ຈຸດປະສົງ ແລະເປົ້າໝາຍ ຂອງກອງປະຊຸມໃນມື້ນີ້ ແມ່ນເພື່ອປຶກສາຫາລືບັນດາຫົວຂໍ້ທີ່ຕິດພັນກັບວາລະກອງປະຊຸມໂຕະມົນ ປະຈຳປີ 2016 ເພື່ອເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ່ VIII (2016-2020), ເຊິ່ງຈະໄດ້ມີການຈັດເປັນ 4 ກຸ່ມສົນທະນາຕາມຫົວຂໍ້ຕໍ່ໄປນີ້:

1. **ຄວາມຄືບໜ້າໃນການເຊື່ອມສານເອົາບັນດາເປົ້າໝາຍການພັດທະນາແບບຍືນຍົງ**

**ຕໍ່ວຽກງານການເຊື່ອມສານເອົາເປົ້າໝາຍການພັດທະນາແບບຍືນຍົງເຂົ້າໃນວາລະການພັດທະນາແຫ່ງຊາດ ກໍ່ຄືເຂົ້າໃນວາລະການພັດທະນາລະດັບແຂວງ, ພວກເຮົາຫວັງຢ່າງຍິ່ງວ່າ ການສົນທະນາໃນຫົວຂໍ້ນີ້ ຈະມີຜົນປະໂຫຍດໃຫ້ແກ່ແຂວງວຽງຈັນ ເພື່ອທີ່ຈະສາມາດ ນຳໄປຈັດຕັ້ງປະຕິບັດ ກໍ່ຄື ການຕິດຕາມໃຫ້ມີປະສິດທິພາບ.**

2. **ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນງານການຄໍ້າປະກັນສະບຽງອາຫານ ແລະໂພຊະນາການ**

ໂດຍຖືເອົາເປົ້າໝາຍ ເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາເປັນຈຸດໃຈກາງ. ການຖອດຖອນບົດຮຽນຈາກການຮ່ວມມືກັນທົດລອງຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຢູ່ທັງຂັ້ນສູນກາງ ແລະທ້ອງຖິ່ນ, ວິທີການ ແລະກົນໄກ ແມ່ນມີຄວາມສຳຄັນຫຼາຍ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ທັງນີ້ກໍ່ເພື່ອໃຫ້ໄປຮອດໄປເຖິງຊຸມຊົນທີ່ຢູ່ຫ່າງໄກສອກຫຼີກ ແລະ**ທັງເປັນ**ຍຸດທະສາດສົ່ງເສີມການມີສ່ວນຮ່ວມຂອງທ້ອງຖິ່ນ.

3. **ການຈັດຕັ້ງປະຕິບັດບັນດາຍຸດທະສາດວ່າດ້ວຍການເຕີບໂຕສີຂຽວ, ການປ່ຽນແປງຂອງດິນຟ້າອາກາດ ແລະການກຽມຄວາມພ້ອມ ເພື່ອຮັບມືກັບໄພພິບັດທາງທຳມະຊາດຕ່າງໆ**

ທັງຢູ່ຂັ້ນສູນກາງ ແລະຂັ້ນແຂວງ. **ເພື່ອເຮັດໃຫ້ວຽກງານດັ່ງກ່າວປະກົດຜົນເປັນຈິງພວກເຮົາ** ຈະຕ້ອງໄດ້ກຳນົດບັນດາຄູ່ຮ່ວມມືທີ່ມາຈາກ**ພາກລັດ, ພາກເອກະຊົນ ແລະທຸກພາກສ່ວນທີ່ມີສ່ວນຮ່ວມໃນສັງຄົມ** ໃຫ້ຢູ່ໃນແຖວໜ້າໃນການຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວ ໃນ ສປປ ລາວ; ພ້ອມກັນນີ້, ຈະຕ້ອງໄດ້ປັບປຸງບັນດາໜ້າວຽກທີ່ຕິດພັນກັບວຽກງານການປ່ຽນແປງຂອງດິນຟ້າອາກາດ ແລະການກຽມຄວາມພ້ອມ ເພື່ອຮັບມືກັບໄພພິ ບັດທາງທຳມະຊາດ ທີ່ລັດຖະບານ ແລະຄູ່ຮ່ວມພັດທະນາກຳລັງດຳເນີນການຢູ່ ໃຫ້ແທດເໝາະກັບສະພາບຕົວຈິງ.

4. **ການນຳສະເໜີ ແລະປຶກສາຫາລື ກ່ຽວກັບການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ, ໂດຍສະເພາະການຮັບຮອງແຜນດຳເນີນງານຖະແຫຼງການວຽງຈັນ ສະບັບທີ II ວ່າດ້ວຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ**

**ຕໍ່ກັບວຽກງານດັ່ງກ່າວເຫັນວ່າການຮັບຮອງເອົາ** ແຜນດຳເນີນງານຖະແຫຼງການວຽງຈັນສະບັບທີ II ຈະນຳໃຊ້ເປັນເຄື່ອງມືຕິດ ຕາມ, ຄຸ້ມຄອງ ແລະທົບທວນຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍຖະແຫຼງການວຽງຈັນ ທີ່ ລັດຖະບານ ແລະຄູ່ຮ່ວມພັດທະນາ ໄດ້ເຊັນຮັບຮອງເອົາ ຢູ່ໃນກອງປະຊຸມໂຕະມົນລະດັບສູງຄັ້ງທີ່ 12 ໃນປີ 2015. **ພ້ອມທັງເປັນແນວທາງໃນການ**

**ຜັນຂະຫຍາຍວຽກງານການຮ່ວມມືໃຫ້ມີປະສິດທິຜົນ ເຊັ່ນດຽວກັນ**ການປັບປຸງ ດຳລັດເລກທີ 75/PM ວ່າດ້ວຍການຄຸ້ມຄອງ ແລະນຳໃຊ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ **ກໍ່ຈະເປັນວຽກງາຣນທີ່ສຳຄັນ ເພື່ອຈະເຮັດໃຫ້ພວກເຮົາສາມາດຄຸ້ມຄອງ, ຕິດຕາມ ແລະ ນຳໃຊ້ການຊ່ວຍເຫຼືອໄດ້ຢ່າງມີປະສິດທິຜົນ.**

(ລາຍລະອຽດຄະນະຈັດຕັ້ງກອງປະຊຸມຈະເປັນຜູ້ແຈ້ງ)

**ບັນດາທ່ານທີ່ນັບຖື,**

ແຂວງວຽງຈັນ ແມ່ນເປັນແຂວງໜຶ່ງໃນ ແຂວງພາກກາງ ຂອງ ສປປ ລາວ, ມີເນື້ອທີ່ທັງໝົດ 15.927 ກິໂລຕາແມັດ, ມີພົນລະເມືອງທັງໝົດປະມານ 442.159 ຄົນ ອີງໃສ່ສະຖິຕິ ໃນປີ 2016 ແລະ ປະກອບມີ 11 ເມືອງຄື: ເມືອງທຸລະຄົມ, ເມືອງວຽງຄຳ, ເມືອງແກ້ວອຸດົມ, ເມືອງໂພນໂຮງ, ເມືອງຫີນເຫີບ, ເມືອງວັງວຽງ, ເມືອງກາສີ, ເມືອງເຟືອງ, ເມືອງຊະນະຄາມ, ເມືອງໝື່ນ ແລະເມືອງແມດ, ເປັນເຂດທີ່ມີຄວາມອຸດົມສົມບູນ ດ້ວຍຊັບພະຍາກອນທຳມະຊາດ, ມີພູມສັນຖານທີ່ແຕກຕ່າງກັນ ແລະເປັນເອກະລັກສະເພາະ, ມີທ່າແຮງດ້ານການພັດທະນາອຸດສາຫະກຳ ແລະການຄ້າ ແລະການກະສິກຳ ແຕ່ທ່າແຮງດັ່ງກ່າວຍັງບໍ່ທັນໄດ້ຖືກຂຸດຄົ້ນ ແລະນຳໃຊ້ໃຫ້ມີປະສິດທິຜົນຕາມຄວາມສາມາດຕົວຈິງເທົ່າທີ່ຄວນ, ເປັນສາເຫດໃຫ້ບາດກ້າວການຂະຫຍາຍຕົວ ໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງວຽງຈັນ ຍັງບໍ່ຂະຫຍາຍຕົວເທົ່າທີ່ຄວນ ເພາະປະຊາກອນສ່ວນໃຫຍ່ ແມ່ນຍັງອາໄສຮູບແບບການດຳລົງຊີວິດໂດຍອາໄສທຳມະຊາດເປັນຫລັກ ແລະຊອກຢູ່ຫາກິນແບບ ເພິ່ງຕົນເອງ ກຸ້ມຕົນເອງ ເປັນສ່ວນຫລາຍ. ເວົ້າລວມແລ້ວ, ລະດັບການພັດທະນາຂອງແຂວງ ແມ່ນຍັງຊັກຊ້າ ແລະມີການຫລຸດໂຕນກັນຫລາຍ ເມື່ອທຽບກັບຈັງຫວະການພັດທະນາ. ໂດຍຈາກຂໍ້ມູນດ້ານສະຖິຕິຂອງແຂວງ ສາມາດຊີ້ໃຫ້ເຫັນໄດ້ວ່າ ຈຳນວນຄອບຄົວທຸກຍາກຢູ່ແຂວງມີປະມານ 1.033 ຄອບຄົວ ເທົ່າກັບ 1,27 ເປີເຊັນ ຂອງຈ□ານວນຄອບຄົວທັງໝົດໃນທົ່ວແຂວງ ແລະປະມານ 10 ບ້ານທຸກຍາກ ຂອງຈຳນວນບ້ານຢູ່ແຂວງ ແມ່ນຍັງຖືກຈັດເປັນບ້ານທຸກຍາກ

ຂ້າພະເຈົ້າ ເຊື່ອໝັ້ນວ່າກອງປະຊຸມປຶກສາຫາລື ໃນມື້ນີ້, ບັນດາທ່ານຜູ້ເຂົ້າຮ່ວມ ຈະໄດ້ພ້ອມກັນສົນທະນາປຶກສາຫາລືແລກປ່ຽນຄຳຄິດເຫັນທີ່ສ້າງສັນ ແລະເປັນປະໂຫຍດ ເພື່ອເຮັດແນວໃດ ໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ເວົ້າລວມ ເວົ້າສະເພາະ ກໍ່ຄື ແຜນພັດທະນາເສດຖະກິດ-ສັງຄົມ ຂອງ ແຂວງວຽງຈັນ ໃຫ້ມີໝາກຜົນສຳເລັດ ແລະບັນລຸໄດ້ຄາດໝາຍທີ່ກຳນົດໄວ້.

**ບັນດາທ່ານ ແຂກຜູ້ມີກຽດ,**

**ທ່ານ ຍິງ ທ່ານ ຊາຍ,**

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍອວຍພອນໃຫ້ ບັນດາທ່ານ ລັດຖະມົນຕີ/ຮອງລັດຖະມົນຕີ, ບັນດາທ່ານທູດຕານຸທູດ, ຜູ້ຕາງໜ້າ ອົງການຈັດຕັ້ງສາກົນ ແລະຄູ່ຮ່ວມພັດທະນາ, ບັນດາທ່ານຫົວໜ້າກົມ/ຮອງກົມ ແລະຜູ້ແທນຈາກ ນະຄອນຫຼວງວຽງຈັນ ແລະ16 ແຂວງ, ຈົ່ງມີ

ສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ມີຄວາມເບີກບານມ່ວນຊື່ນ ແລະຂໍໃຫ້ກອງປະຊຸມມີບັນຍາກາດຟົດຟື້ນ ແລະບັນລຸຜົນສຳເລັດຕາມຄາດໝາຍທີ່ກຳນົດໄວ້.

## ໑ ຂໍຂອບໃຈ ໑